ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0472/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 10 MAR 2016

## ແຈ້ງການ

ເຖິງ: ບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການນຳໃຊ້ແບບຟອມໃບອະນຸຍາດນຳເຂົ້າ, ໃບອະນຸຍາດສົ່ງອອກສິນຄ້າ ສະບັບປັບປຸງໃໝ່.

- ອີງຕາມ ດຳລັດ ຂອງລັດຖະບານ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍຂັ້ນຕອນການອອກອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ

ເພື່ອໃຫ້ການນຳໃຊ້ແບບຟອມໃບອະນຸຍາດນຳເຂົ້າ ແລະ ໃບອະນຸຍາດສົ່ງອອກສິນຄ້າ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ໃຫ້ມີຄວາມສະດວກງ່າຍດາຍ, ຫຼຸດຜ່ອນເວລາ ແລະ ຂັ້ນຕອນໃນການດຳເນີນເອກະສານເໝາະສົມກັບສະພາບຕົວຈິງໃນປະຈຸບັນ.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:

1. ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ອອກຄຳແນະນຳການນຳໃຊ້ແບບຟອມໃບອະນຸຍາດນຳເຂົ້າ ແລະ ໃບອະນຸຍາດສົ່ງອອກສະບັບປັບປຸງໃໝ່ ແລະ ອັບໂຫຼດແບບຟອມໃບອະນຸຍາດດັ່ງກ່າວຂຶ້ນສູນຂໍ້ມູນຂ່າວສານທາງດ້ານການຄ້າ (LTP) ເພື່ອໃຫ້ພາກລັດ ແລະ ພາກທຸລະກິດສາມາດດາວໂຫຼດໄດ້;
2. ໃນໄລຍະກ້າວຜ່ານເພື່ອຫັນໄປສູ່ການອອກອະນຸຍາດແບບທັນສະໄໝ (**Electronic - License**), ການນຳໃຊ້ແບບຟອມໃບອະນຸຍາດ ແມ່ນສາມາດເລືອກນຳໃຊ້ໄດ້ທັງສອງລະບົບໄປພ້ອມກັນຈົນກວ່າທຸກພາກສ່ວນຈະມີຄວາມພ້ອມ ຄື: ① ລະບົບເກົ່າ (ຊື້ແບບຟອມນຳຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອໄປປະກອບ) ② ລະບົບໃໝ່ (ດາວໂຫຼດຜ່ານ LTP ຫຼັງຈາກປະກອບແລ້ວມາຍື່ນຂໍອະນຸມັດແລ້ວຊຳລະຕາມພາຍຫຼັງ);
3. ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການເຜີຍແຜ່, ນຳພາພາກທຸລະກິດ ເພື່ອຈັດຕັ້ງປະຕິບັດການນຳໃຊ້ແບບຟອມໃບອະນຸຍາດນຳເຂົ້າ ແລະ ໃບອະນຸຍາດສົ່ງອອກສິນຄ້າສະບັບປັບປຸງໃໝ່ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
4. ການນຳໃຊ້ແບບຟອມໃບອະນຸຍາດນຳເຂົ້າ, ໃບອະນຸຍາດສົ່ງອອກສະບັບປັບປຸງໃໝ່ ແມ່ນໃຫ້ເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ເມສາ 2016 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ທ. ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ຂຽວສະຫວາດ ສະແຫວງສຶກສາ

<u>ບ່ອນສົ່ງ:</u>

- ກົມພາສີ, ກົມອາກອນ, ກະຊວງການເງິນ 'ເພື່ອຊາບ'
- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ 'ເພື່ອຊາບ'
- ສະພາອຸດສາຫະກຳ ແລະ ການຄ້າ 'ເພື່ອແຈ້ງໃຫ້ນັກທຸລະກິດຊາບ'

<u>ເອກະສານຄັດຕິດ:</u>

- ຮ່າງໃບອະນຸຍາດສະບັບໃໝ່